ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 1310 /ຫອຄ.ກຄພນ

ນະຄອນຫຼວງວຽງຈັນ,ວັນທີ 25 MAY 2018

## ແຈ້ງການ

ເຖິງ : ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫລວງວຽງຈັນ.

ເລື່ອງ : **ການທົດລອງຈັດຕັ້ງປະຕິບັດລາຄາຊີ້ນຳ ອາຫານຈານດ່ວນ ປະເພດ: ເຝີ, ເຂົ້າປຽກ, ເຂົ້າຜັດ ແລະ ເຂົ້າລາດໜ້າ.**

- ອີງຕາມ ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບ ເລກທີ 02/ສພຊ, ລົງວັນທີ30 ມິຖຸນາ 2010.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ສະບັບ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບ ເລກທີ 1273/ອຄ, ລົງວັນທີ 25 ກໍລະກົດ 2016.

ເພື່ອເຮັດໃຫ້ລາຄາອາຫານຈານດ່ວນປະເພດ: ເຝີ, ເຂົ້າປຽກ, ເຂົ້າຜັດ ແລະ ເຂົ້າລາດໜ້າ ມີລາຄາທີ່ສົມເຫດສົມຜົນ, ຜູ້ດຳເນີນທຸລະກິດສາມາດມີກຳໄລ ແລະ ຜູ້ຊົມໃຊ້ສາມາດບໍລິໂພກອາຫານທີ່ມີຄຸນນະພາບ ໃນລາຄາທີ່ເໝາະສົມ, ທັງສາມາດຮັກສາໄດ້ສະຖຽນລະພາບທາງດ້ານລາຄາ, ຊ່ວຍຫຼຸດຜ່ອນພາລະຄ່າຄອງຊີບຂອງຜູ້ຊົມໃຊ້ໃຫ້ໄດ້ຮັບການແກ້ໄຂດີຂຶ້ນເທື່ອລະກ້າວ ແລະ ທັງເປັນການຮອງຮັບປີທ່ອງທ່ຽວລາວ 2018.

**ຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ສົມທົບກັບພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ພ້ອມກັນຈັດຕັ້ງປະຕິບັດລາຄາຊີ້ນຳການຂາຍອາຫານຈານດ່ວນປະເພດ: ເຝີ, ເຂົ້າປຽກ, ເຂົ້າຜັດ ແລະ ເຂົ້າລາດໜ້າ ສູງສຸດບໍ່ໃຫ້ເກີນ 15,000 ກີບ/ຖ້ວຍ/ຈານ ຕາມປະລິມານ ທີ່ກຳນົດໄວ້ໃນໂຄງປະກອບລາຄາຄັດຕິດມາພ້ອມນີ້ (ຖ້າກໍລະນີຜູ້ຊົມໃຊ້ ມີຄວາມຕ້ອງການອາຫານໃນປະລິມານພິເສດ ກໍໃຫ້ຕົກລົງລາຄາ ແລະ ເອກະພາບກັບຜູ້ດຳເນີນທຸລະກິດເອງ);
2. ລາຄາຊີ້ນຳອາຫານຈານດ່ວນ ແມ່ນໃຫ້ປະຕິບັດຢູ່ຕາມຮ້ານອາຫານທົ່ວໄປ, ຫ້ອງອາຫານຢູ່ຕາມສຳນັກງານຫ້ອງການ, ສູນອາຫານໃນຫ້າງສັບພະສິນຄ້າ, ຮ້ານອາຫານຢູ່ຕາມໂຮງງານ, ໂຮງໝໍ, ໂຮງຮຽນ, ສະຖາບັນການສຶກສາ ແລະ ສະຖານທີ່ທ່ອງທ່ຽວ ຢູ່ພາຍໃນນະຄອນຫຼວງວຽງຈັນ;

3. ກ່ອນຈະມີການປ່ຽນແປງລາຄາແຕ່ລະຄັ້ງ, ຜູ້ດຳເນີນທຸລະກິດຕ້ອງແຈ້ງເຫດຜົນ ບົນພື້ນຖານຕົ້ນທຶນລາຄາວັດຖຸດິບໃນໂຄງປະກອບລາຄາທີ່ນຳມາປຸງແຕ່ງ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ;

4. ຖ້າຫາກພົບເຫັນຜູ້ດຳເນີນທຸລະກິດໃດຂາຍເກີນລາຄາຊີ້ນຳ ແມ່ນໃຫ້ປະຕິບັດມາດຕະການຕາມທີ່ກຳນົດໄວ້ ໃນດຳລັດ 474/ນຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ຈັດຕັ້ງເຜີຍແຜ່ແຈ້ງການສະບັບນີ້ໃຫ້ຜູ້ດຳເນີນທຸລະກິດກ່ຽວຂ້ອງ ຢູ່ໃນຂອບເຂດນະຄອນຫຼວງວຽງຈັນໃຫ້ຮັບຮູ້, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ພ້ອມທັງຊີ້ນຳບັນດາຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ ໃຫ້ເອົາໃຈໃສ່ຕິດຕາມ ກວດກາການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ເຂັ້ມງວດ ແລະ ໃຫ້ສະຫຼຸບ, ຕີລາຄາ ແລະ ປະເມີນຜົນການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ (3 ເດືອນ/ຄັ້ງ) ແລ້ວລາຍງານໃຫ້ກົມການຄ້າພາຍໃນຊາບ ເພື່ອເປັນຂໍ້ມູນ ແລະ ບ່ອນອີງໃນການລາຍງານຂັ້ນເທິງມີທິດຊີ້ນຳຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ;

6. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າຫ້ອງການ

ຫ້ອງການ

ນ.ຍານສະຕິ ເທບພະວົງ